# Senior Farmers Market Nutrition Program (SFMNP)

## ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆກ່ຽວກັບບັດສະວັດດີການ

### ຈະໃຊ້ບັດສະວັດດີການຂອງໂຄງການໂພຊະນາການຕະລາດຊາວສວນສຳລັບຄົນແກ່ຊາຣາ (SFMNP) ຂອງທ່ານໄດ້ແນວໃດ




1. ຖືເອົາບັດສະວັດດີການ SFMNP ຂອງທ່ານຫລື QR ໂຄດຂອງທ່ານຢູ່ໃນໂມໂບແອບ໌ SFMNP ໄປຫາ ໄປຫາຕະລາດຊາວສວນຫລືຮ້ານຊາວສວນທີ່ເຂົ້າຮ່ວມນຳ.
2. ເລືອກເອົາຜະລິດຜົນສົດຫລືນ້ຳເຜີ້ງຂອງທ່ານ.
3. ຊາວສວນຈະສະແກນເອົາ QR ໂຄດຂອງທ່ານໂດຍການໃຊ້ໂທຣະສັບຫລືເຄື່ອງໂມໂບຂອງເຂົາເຈົ້າ.
4. ກວດເບິ່ງຈຳນວນເງິນຂອງການຊື້ຂອງທ່ານວ່າຖືກຕ້ອງແລະຕີເລກ PIN* 4-ຕົວຂອງທ່ານເຂົ້າໃສ່.
5. ຊາວສວນຈະຢືນຢັນການຊື້ຂອງທ່ານແລະທ່ານຈະໄດ້ຮັບຜະລິດຜົນສົດ,ທ້ອງຖິ່ນຫລືນ້ຳເຜີ້ງຂອງທ່ານ!

**PIN*: ບັດຈະມາເຖິງພ້ອມແລ້ວທີ່ຈະໃຊ້ໄດ້ພ້ອມດ້ວຍເລກ PIN 4-ຕົວ. ເລກ PIN 4-ຕົວໃຊ້ເລກສອງຕົວຂອງເດືອນເກີດຂອງທ່ານແລະເລກສອງຕົວສຸດທ້າຍຂອງປີເກີດຂອງທ່ານ (MMYY). ຕົວຢ່າງວ່າ:ວັນເກີດ July 4, 1963 (07/04/1963) ຈະໃຊ້ເລກ PIN 0763**

## ຄຳຖາມທີ່ຖືກຖາມເລື້ອຍໆ

| | |
|---|---|
| **ຂ້ອຍຕ້ອງໄດ້ເປີດບັດຂອງຂ້ອຍໃຫ້ໃຊ້ການໄດ້ບໍ່?** | **ບໍ່ຕ້ອງ,** ທ່ານບໍ່ຕ້ອງໄດ້ເຮັດໃຫ້ບັດຂອງທ່ານໃຊ້ການໄດ້.ບັດທີ່ຖືກເຮັດອອກມາໃຫມ່ໆໄດ້ຖືກຕື່ມໃສ່ດ້ວຍເງິນສະວັດດີການ $80 ແລະເລກ PIN ນີ້ງດຽວທີ່ໃຊ້ວັນເກີດຂອງທ່ານ. |
| **ເມື່ອໃດຂ້ອຍສາມາດໃຊ້ສະວັດດີການຂອງຂ້ອຍ?** | ເງິນສະວັດດີການ SFMNP ຂອງທ່ານສາມາດຖືກໃຊ້ຕັ້ງແຕ່ເດືອນ **June 1 ໄປເຖິງ October 31**. ກະຣຸນາຮູ້ຈັກໄວ້ວ່າສະວັດດີການບໍ່ກີ້ງໄປຈາກປີຕໍ່ປີ.ສະວັດດີການທີ່ບໍ່ຖືກໃຊ້ທັງຫມົດທີ່ຍັງເຫລືອຢູ່ໃນບັດບໍ່ສາມາດຖືກໃຊ້ໄດ້ຫລັງຈາກເດືອນ October 31. |
| **ເລກPIN ຂອງຂ້ອຍແມ່ນຫຍັງ?** | **ບັດ SFMNP ຂອງທ່ານຈະມາເຖິງພ້ອມດ້ວຍເລກ PIN**. ເລກ PIN 4- ຕົວຂອງທ່ານແມ່ນເດືອນແລະປີເກີດຂອງທ່ານ.ຕົວຢ່າງເລກ PIN: ວັນເກີດ - July 4, 1963, PIN: 0763. ທ່ານຈະຕ້ອງການເລກ 4-ຕົວເລກນີ້ເພື່ອຈະກວດເບິ່ງວ່າການຊື້ຂອງທ່ານວ່າຖືກຕ້ອງ. |
| **ຂ້ອຍສາມາດປ່ຽນເລກPIN ຂອງຂ້ອຍໄດ້ບໍ່?** | ແມ່ນ, ທ່ານສາມາດປ່ຽນເລກ PIN ຂອງທ່ານໂດຍການໂທຫາເລກ 1-844-359-3104. ເພື່ອຈະປ່ຽນເລກ PIN ຂອງທ່ານ,ທ່ານຈະຕ້ອງການເລກ 16-ຕົວຢູ່ໃນບັດ SFMNP ຂອງທ່ານ,ວັນເກີດຂອງທ່ານ (ຢູ່ໃນແບບຮ່າງ MMDDYYYY), ແລະຊິບໂຄດຂອງທ່ານ. **ເຄັດລັບ: ເລືອກເອົາເລກ PIN ທີ່ທ່ານສາມາດຈື່ໄດ້ງ່າຍໆ,ແລະຢ່າສູ່ຂຽນເລກ PIN ອັນນີ້ໃສ່ບັດຂອງທ່ານ.** |
| **ຂ້ອຍສາມາດຊື້ເອົາຫຍັງແດ່ດ້ວຍບັດສະວັດດີການຂອງຂ້ອຍ?** | ທ່ານສາມາດໃຊ້ສະວັດດີການຂອງທ່ານເພື່ອຈະຊື້ເອົາຫມາກໄມ້ສົດ,ມີພະລານາໄມ,ບໍ່ຖືກຈັດແຈງເທື່ອ,ປູກຢູ່ໃນທ້ອງຖິ່ນ,ຜັກ,ນ້ຳເຜີ້ງ,ແລະສະມຸນໄພຕັດໃຫມ່ໆ.<br>ທ່ານ **ບໍ່ສາມາດ** ໃຊ້ສະວັດດີການ SFMNP ຂອງທ່ານເພື່ອຈະຊື້ເອົາຫມາກໄມ້ຫລືຜັກແຫ້ງ,ສະມຸນໄພແຫ້ງ,ຫມາກໄມ້ຫລືຜັກປູກໃສ່ໂຖ,ສະມຸນໄພປູກໃສ່ໂຖ,ໄຂ່,ຊີ້ນ,ເນີຍ,ແລະອາຫານທະເລ. |
| **ຂ້ອຍສາມາດໃຊ້ສະວັດດີການ SFMNP ຢູ່ໃສ?** | ຊອກເບິ່ງປ້າຍເຫລົ່ານີ້ອັນໃດກໍໄດ້ຢູ່ຕາມຕະລາດຊາວສວນບ່ານທີ່ເຂົ້າຮ່ວມນຳ.ລາຍຊື່ຂອງຕະລາດຊາວສວນແລະຮ້ານຊາວສວນທີ່ຖືກອະນຸຍາດສາມາດຖືກພົບເຫັນຢູ່ໃນໂມໂບແອບ໌ SFMNP ແລະທາງອອນລາຍນ໌ "ຂ້ອຍສາມາດໃຊ້ສະວັດດີການ SFMNP ຂອງຂ້ອຍຢູ່ໃສ?" ຢູ່ທີ່ seniorfmnp.com.     |

| | |
|---|---|
| ຂ້ອຍຈະກວດເບິ່ງເງິນຍັງເຫລືອຢູ່ຂອງຂ້ອຍໄດ້ແນວໃດ? | ບັດສະວັດດີການSFMNP ຂອງທ່ານຈະມີສະວັດດີການເລີ່ມຕົ້ນດ້ວຍມູນຄ່າ $80. ອັນນີ້ແມ່ນຫົນທາງບາງທາງເພື່ອຈະກວດເບິ່ງເງິນຍັງເຫລືອຢູ່ຂອງທ່ານ:<br>1. ດາວໂຫລດໂມໂບແອບ໌ SFMNP ແລະຕິດຕາມເບິ່ງເງິນຍັງເຫລືຢູ່ຂອງທ່ານໂດຍການໃຊ້ "My Benefits".<br>2. ໂທຫາເລກໂທຣະສັບ "benefit balance" ຢູ່ດ້ານຫລັງຂອງບັດ SFMNP ຂອງທ່ານໄດ້ທີ່ເລກ 1-844-359-3104. **ຫມາຍເຫດ:** ຜູ້ໂທມາເທື່ອທຳອິດຈະຖືກບອກໃຫ້ຕັ້ງເລກ PIN. ທ່ານຈະຕ້ອງໄດ້ຕີເລກບັດ 16-ຕົວຂອງທ່ານໃສ່,ວັນເກີດ (MMDDYYYY), ແລະຊິບໂຄດເພື່ອຈະຕັ້ງເລກ PIN ຂອງທ່ານໃສ່ເລກ 4-ຕົວໃດກໍໄດ້.ທ່ານສາມາດໃຊ້ເລກ PIN (MMYY) ອັນດຽວກັນຖ້າຫາກວ່າທ່ານຕ້ອງການ,ຫລືວ່າທ່ານສາມາດເລືອກເອົາທີ່ຈະປ່ຽນໃສ່ເລກຕ່າງ.<br>3. ກ່ອນທີ່ທ່ານຈະທຳການຊື້ທີ່ມີເງື່ອນໄຂ,ຊາວສວນຜູ້ເຂົ້າຮ່ວມຍັງສາມາດຊ່ວຍກວດເບິ່ງສະວັດດີການທີ່ຍັງເຫລືອຢູ່ຂອງທ່ານ. |
| ຂ້ອຍຄວນຈະເຮັດຫຍັງຖ້າຫາກວ່າຂ້ອຍບໍ່ສາມາດຊອກຫາຊາວສວນຜູ້ທີ່ຈະຮັບເອົາສະວັດດີການຂອງຂ້ອຍ? | ຖ້າຫາກວ່າທ່ານບໍ່ເຫັນຊາວສວນຄົນໃດມີປ້າຍ "Farmers Market Benefits Welcome Here!", ແລ້ວໄປຫາ "ຕູ້ຣາຍຣະອຽດ" ຊຶ່ງສ່ວນຫລາຍແລ້ວຢູ່ທາງກາງຂອງຕະລາດຊາວສວນ.ບໍ່ວ່າແມ່ນໃຜຢູ່ທີ່ນັ້ນຈະຍິນດີທີ່ຈະຊ່ວຍທ່ານຊອກຫາຊາວສວນຜູ້ທີ່ຮັບເອົາສະວັດດີການ SFMNP ຂອງທ່ານ. |
| ຂ້ອຍຄວນຈະເຮັດຫຍັງຖ້າຫາກວ່າຂ້ອຍເຮັດບັດຂອງຂ້ອຍເສັຽ? | ບັດທີ່ຖືກເສັຽໄປຫລືຖືກຂະໂມຍໄປຈະຖືກເຮັດໃຫມ່ແທນ.ກະຣຸນາຕິດຕໍ່ຫາຫ້ອງການທ້ອງຖິ່ນບ່ອນທີ່ທ່ານໄດ້ຮ້ອງຂໍເອົາ SFMNP ຫລື ໂທຫາເລກພະແນກປະຊາສັມພັນ (1-800-841-1410) ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບການດຳເນີນການອັນນີ້. |
| ຄົນໃດຄົນນຶ່ງສາມາດອອກຕະລາດໃຫ້ຂ້ອຍໄດ້ບໍ່ໂດຍການໃຊ້ບັດໃບນີ້? | ພວກເຮົາຂໍແນະນຳໃຫ້ທ່ານເຂົ້າຮ່ວມຢ່າງຈິງຈັງໃນການໃຊ້ສະວັດດີການຂອງທ່ານເພື່ອຈະຊື້ເອົາຜົນລະປູກສົດຫລືນ້ຳເຜີ້ງ.ເຖິງຢ່າງໃດກໍຕາມ,ຖ້າຫາກວ່າທ່ານບໍ່ສາມາດທີ່ຈະເຂົ້າຮ່ວມຢ່າງຈິງຈັງໃນການໃຊ້ສະວັດດີການຂອງທ່ານ, ທ່ານສາມາດແຕ່ງຕັ້ງຜູ້ຕາງຫນ້າຄົນນຶ່ງເພື່ອຈະທຳການຊື້ໃນນາມຂອງທ່ານ,ກະຣຸນາຂຽນປະກອບແລະເຊັນຊື່ໃບຟອມແຕ່ງຕັ້ງຜູ້ຕາງຫນ້າ (ສະແກນ QR ໂຄດເພື່ອຈະເຂົ້າຫາໃບຟອມຫລືໃຊ້ທີ່ຢູ່ແວບ໌ຂ້າງລຸ່ມນີ້ເພື່ອເຂົ້າຫາພາສາເພີ້ມເຕີມ). https://www.dshs.wa.gov/altsa/home-and-community-services-publications/senior-farmers-market-nutrition-program-documents-translations |
| ຂ້ອຍຄວນຈະເກັບຮັກສາບັດຂອງຂ້ອຍໄວ້ບໍ່ຈາກປີກາຍນີ້? | ຖ້າຫາກວ່າທ່ານມີບັດສະວັດດີການ SFMNP ໃນປີ 2023, ກະຣຸນາຖິ້ມໄປຫລືທຳລາຍບັດຢ່າງປອດພັຍ.ບັດໃບໃຫມ່ຈະຖືກເຮັດອອກໃຫ້ທ່ານໃນປີ 2024. ກະຣຸນາຮັກສາບັດ 2024 ໃຫມ່ຂອງທ່ານໄວ້ຍ້ອນວ່າມັນຈະຖືກໃຊ້ໃນປີຫນ້າ. |
| ຂ້ອຍຕ້ອງມີຄອມພິວເຕີຫລືສະມາດໂຟນບໍ່? | ບໍ່.ທ່ານຈະຕ້ອງການແຕ່ບັດສະວັດດີການ SFMNP ຂອງທ່ານ, QR ໂຄດແລະເລກ PIN ເພື່ອຈະທຳການຊື້! ທ່ານບໍ່ຖືກບັງໃຫ້ມີສະມາດໂຟນຫລືຄອມພິວເຕີເພື່ອຈະໃຊ້ສະວັດດີການຂອງທ່ານ. |
| ຂ້ອຍຈະໄດ້ໂມໂບແອບ໌ SFMNP Mobile ແນວໃດແລະມັນເຮັດຫຍັງ? | ຖ້າຫາກວ່າທ່ານມີສະມາດໂຟນຫລືເຄື່ອງມືເຊັ່ນວ່າ iPad ຫລືແທບເບລັດຄ້າຍຄືກັນ,ທ່ານສາມາດດາວໂຫລດໂມໂບແອບ໌ສະເພາະສະວັດດີການ SFMNP ຂອງທ່ານເທົ່ານັ້ນ.ເມື່ອທ່ານມີບັດສະວັດດີການ SFMNP ຂອງທ່ານແລ້ວ, ທ່ານສາມາດດາວໂຫລດແລະໃຊ້ແອບ໌ SFMNP ເພື່ອຈະກວດເບິ່ງສະວັດດີການຍັງເຫລືອຢູ່ຂອງທ່ານ,ຊອກຫາຕະລາດທ້ອງຖິ່ນ,ເບິ່ງປະວັດຂອງການຊື້ຂອງທ່ານ,ຫລືເຂົ້າຫາຣາຍຣະອຽດແລະການຊູ້ມຊູເພີ້ມເຕີມ.ກວດເບິ່ງໃບຂ່າວ SFMNP Mobile App flyer.<br>**ເຄື່ອງມື Apple** **ເຄື່ອງມື Android** |

Washington State Department of Social & Health Services
Transforming lives